ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ
ພະແນກ ອຸດສາຫະກຳ ແລະ ການຄ້າ

0715
ເລກທີ /ອຄ.ນວ.ອທ
ວັນທີ 04 ມິຖຸນາ 2021

## ແຈ້ງການແນະນຳ

ເຖິງ: - ທ່ານ ຫົວໜ້າຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ 09 ຕົວເມືອງ ໃນນະຄອນຫຼວງວຽງຈັນ.
- ທ່ານ ຜູ້ອຳນວຍການໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທົ່ວນະຄອນຫຼວງວຽງຈັນ.
- ພະນັກງານ, ກຳມະກອນ ທີ່ເຮັດວຽກຢູ່ບັນດາໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນນະຄອນຫຼວງວຽງຈັນ.

ເລື່ອງ: ເພີ່ມທະວີ ແລະ ມາດຕະການ ສະກັດກັ້ນ, ຄວບຄຸມ ເພື່ອຕ້ານການລະບາດຂອງພະຍາດ ໂຄວິດ-19 ຢູ່ໃນໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນນະຄອນຫຼວງວຽງຈັນ ໄລຍະວັນທີ 05 ຫາ 19 ມິຖຸນາ 2021.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ ໂຄວິດ-19 (COVID-19) ເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມ ແຈ້ງການ ວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ -19 ສະບັບເລກທີ 595/ຫສນຍ, ລົງວັນທີ 04 ມິຖຸນາ 2021.
- ອີງຕາມ ແຈ້ງການ ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງ ການເພີ່ມທະວີມາດຕະການປ້ອງກັນຄວບຄຸມ, ສະກັດກັ້ນ ແລະ ການແກ້ໄຂການລະບາດຂອງພະຍາດ ໂຄວິດ-19 ສະບັບເລກທີ 012/ສພກ.ນວ ລົງວັນທີ 04 ມິຖຸນາ 2021.

ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແນະນຳໃຫ້ປະຕິບັດ ດັ່ງນີ້:

1. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ນອນຢູ່ໃນເຂດ/ບ້ານແດງ ບໍ່ສາມາດດຳເນີນກິດຈະການໄດ້ ( ໃຫ້ປິດ ); ຍົກເວັ້ນໂຮງງານທີ່ມີທີ່ພັກຂອງແຮງງານຢູ່ໃນບໍລິເວນໂຮງງານຂອງຕົນ, ໂຮງງານຜະລິດສິນຄ້າບໍລິໂພກ, ຢາປົວພະຍາດ, ເຄື່ອງປ້ອງກັນການລະບາດ ແລະ ອຸປະກອນການແພດ ແຕ່ໃຫ້ມີການຄຸ້ມຄອງມາດຕະການປ້ອງກັນຂອງຄະນະສະເພາະກິດວາງອອກຢ່າງເຂັ້ມງວດ. ໃນໄລຍະພັກວຽກໃຫ້ແຈ້ງຕໍ່ພະນັກງານກຳມະກອນ ຂອງຕົນໃຫ້ປະຕິບັດຕາມລະບຽບການບໍ່ໃຫ້ອອກຈາກທີ່ພັກເຊົາຂອງຕົນຖ້າມີຄວາມຈຳເປັນຕ້ອງຂໍອະນຸຍາດຈາກອຳນາດການປົກຄອງບ້ານ.

2. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຕັ້ງຢູ່ນອກເຂດແດງ ຫຼື ບ້ານແດງ ສາມາດດຳເນີນກິດຈະການໄດ້ແຕ່ຕ້ອງປະຕິບັດຕາມມາດຕະການ ດັ່ງນີ້ :

2.1 ໃຫ້ສ້າງແຜນກຳນົດມາດຕະການສະກັດກັ້ນ, ຄວບຄຸມ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ, ຈັດຕັ້ງປະຕິບັດແລະລາຍງານພະແນກອຸດສາຫະກຳ ແລະ ການຄ້າເປັນປະຈຳ;

2.2 ໃຫ້ສືບຕໍ່ປະຕິບັດມາດຕະການຮັກສາໄລຍະຫ່າງຂອງການເຮັດວຽກ ເພື່ອຫຼຸດຄວາມແອອັດຢູ່ໃນສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ບ່ອນພັກເຊົາຂອງໂຮງງານ. ໝາຍສັນຍາລັກເພື່ອກຳນົດຮັກສາໄລຍະຫ່າງ, ຖ້າບໍ່ສາມາດປະຕິບັດຮັກສາໄລຍະຫ່າງ 1 ແມັດໄດ້ ຕ້ອງມີແນວຂັ້ນລະຫວ່າງບຸກຄົນຕໍ່ບຸກຄົນ;

2.3 ຕ້ອງກວດວັດແທກອຸນຫະພູມ, ກໍລະນີພົບເຫັນຜູ້ມີອາການໄຂ້ (ອຸນຫະພູມຮ່າງກາຍສູງກວ່າ 37,5 ອົງສາ (ຊ), ໄອ, ຈາມ, ຫາຍໃຈຍາກ ຫຼື ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປ່ວຍຂອງໂຮງງານ ແລ້ວໂທປຶກສາສາຍດ່ວນ 165, 166 ແລະ ພົວພັນໃຫ້ແພດທ່ເຂົ້າກວດທັນທີ;

2.4 ຕ້ອງໃສ່ຜ້າປິດປາກ-ດັງ ທຸກຄັ້ງ ໃນເວລາຢູ່ສະຖານທີ່ເຮັດວຽກ ແລະ ສະຖານທີ່ທີ່ມີຄົນຈຳນວນຫຼາຍ;

2.5 ຕ້ອງມີນໍ້າດື່ມສະອາດ, ມີບ່ອນລ້າງມືດ້ວຍນໍ້າສະອາດໃສ່ສະບູ ຫຼື ເຈວລ້າງມືຖືກຕາມຫຼັກການອະນາໄມ;

2.6 ໃຫ້ອະນາໄມ ແລະ ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສຳພັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

2.7 ໂຮງງານທີ່ມີຈຳນວນກຳມະກອນຫຼາຍ ຕ້ອງຈັດແບ່ງເວລາການກິນເຂົ້າເປັນຫຼາຍໆ ແລະ ບ່ອນນັ່ງກິນເຂົ້າຕ້ອງມີແຜ່ນກັ້ນບັງ ເພື່ອຮັກສາໄລຍະຫ່າງ ແລະ ຫຼຸດຜ່ອນຄວາມສ່ຽງໃນການແຜ່ລະບາດຂອງພະຍາດໂຄວິດ - 19.

2.8 ຫ້າມເຮັດກິດຈະກຳຊຸມແຊວ ຫຼື ພົວພັນແບບໃກ້ຊິດທີ່ບໍ່ສາມາດຮັກສາໄລຍະຫ່າງ ຫຼືກິດຈະກຳອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ.

3. ພະນັກງານ ກຳມະກອນຜູ້ໃດທີ່ພັກເຊົາຢູ່ບ້ານທີ່ມີຜູ້ຕິດເຊື້ອ(ເຂດແດງ)ແມ່ນໃຫ້ຢຸດການມາເຮັດວຽກ ແລະຈຳກັດບໍລິເວນໃຫ້ຄົບ 14 ວັນ ຖ້າບໍ່ມີອາການຈຶ່ງສາມາດມາເຮັດວຽກໄດ້.

4. ສຳລັບໂຮງງານທີ່ມີຜູ້ຕິດເຊື້ອຕ້ອງໄດ້ປິດຊົ່ວຄາວ 14 ວັນ ເພື່ອດຳເນີນການອານາໄມ ແລະ ຂ້າເຊື້ອ ພ້ອມກັນນັ້ນພະນັກງານ - ກຳມະກອນ ກໍ່ຕ້ອງຈຳກັດບໍລິເວນຕົນເອງ ຄົບ 14 ວັນເຊັ່ນດຽວກັນ;

5. ລົດຮັບ-ສົ່ງພະນັກງານ ກຳມະກອນ ຕ້ອງມີຄວາມຮັບປະກັນການນັ່ງໃນລົດຕ້ອງຮັກສາໄລຍະຫ່າງໃຫ້ ໄດ້ 1 ແມັດຂຶ້ນໄປ ຫຼື ມີແຜ່ນກັ້ນບັງລະຫວ່າງບ່ອນນັ່ງ.

6. ໃຫ້ຊຸກຍູ້ພະນັກງານ ແລະ ກຳມະກອນ ທີ່ເຮັດວຽກຢູ່ໃນໂຮງງານ ໄປສັກຢາວັກຊິນປ້ອງກັນພະຍາດໂຄວິດ-19.

7. ໃຫ້ຂະແໜງອຸດສາຫະກຳ ແລະຫັດຖະກຳ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດພ້ອມທັງສະຫຼຸບລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເປັນແຕ່ລະວັນ;

8. ໃຫ້ໂຮງງານທີ່ດຳເນີນການຜະລິດ ແລະ ບໍ່ດຳເນີນການຜະລິດໃຫ້ແຈ້ງເປັນລາຍລັກອັກສອນໃຫ້ພະແນກອຸດ ສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຕາມເບີປະສານງານໂທ ແລະ ວອດແອັບ:
020 55669694, 020 22226438.

9. ການຈັດຕັ້ງປະຕິບັດ ແລະ ມາດຕະການປັບໃໝ:
ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ນອນຢູ່ໃນເຂດ/ບ້ານແດງ ມອບໃຫ້ຫ້ອງການອຸດສາຫະກຳ-ການຄ້າເມືອງ ສົມທົບກັບຄະນະສະເພາະກິດຂັ້ນເມືອງ ແລະ ອຳນາດການປົກຄອງບ້ານ ເປັນເຈົ້າການໃນການໂຄສະນາ, ເຜີຍແຜ່ແຈ້ງການສະບັບນີ້ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນເມືອງຂອງຕົນຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ພ້ອມທັງກວດກາຕິດຕາມ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ ຄື: ປັບໃໝ ແຕ່ 1.000.000 ກີບ - 5.000.000 ກີບ/ຄັ້ງ ຕາມແຕ່ລະກໍລະນີ.

10. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ ເລກທີ 0633/ອຄ.ນວ.ອຫ, ລົງວັນທີ 22 ພຶດສະພາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການແນະນຳສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າພະແນກ

ບ. ວັນນະປີ ພົມມະລາບ

<u>ບ່ອນສົ່ງ</u>
- ຫ້ອງການກະຊວງ ອຸດສາຫະກຳ ແລະ ການຄ້າ ( ເພື່ອລາຍງານ ).
- ກົມ ອຸດສາຫະກຳ ແລະ ຫັດຖະກຳ, ກະຊວງ ອຄ ( ເພື່ອລາຍງານ ).
- ຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນ ( ເພື່ອລາຍງານ ).
- ທ່ານ ເຈົ້າເມືອງ 09 ຕົວເມືອງ ( ເພື່ອຊາບ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ ).
- ຫ້ອງການ ປກສ ນວ ( ເພື່ອລາຍງານ )
- ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ 09 ຕົວເມືອງ ( ເພື່ອກວດກາ ແລະ ປະຕິບັດ ).
- ບ້ານທີ່ໂຮງງານຕັ້ງຢູ່ ( ເພື່ອກວດກາ ແລະ ປະຕິບັດ ).
- ໂຮງງານ ( ເພື່ອປະຕິບັດ ).